ວິທີຂຽນບົດລາຍງານສິດທິເງື່ອນໄຂ/ສະຖານະ QR 7 ປະຈຳໄຕມາດຂອງທານ

ສຳລັບການຊ່ວຍເຫຼືອເງິນສົດ ແລະ ບັດອາຫານ

- ເກັບຮັກສາໄວ້ແຈ້ງການນີ້ເພື່ອຊ່ວຍເຫຼືອທ່ານໃນການຕື່ມແບບຟອມ QR 7 (ບົດລາຍງານສິດທິເງື່ອນໄຂ/ສະຖານະ) ຂອງທ່ານ ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອໃນການຕື່ມບົດລາຍງານຂອງທ່ານ, ໃຫ້ບອກພະນັກງານຂອງທ່ານ.
- ຖ້າທ່ານບໍ່ສົ່ງບົດລາຍງານທີ່ສົມບູນເຊິ່ງປະກອບມີ, ແຕ່ບໍ່ຈຳກັດ, ການຕອບທຸກໆຄຳຖາມໃນແບບຟອມ QR 7 ແລະ ຕິດຄັດຫຼັກຖານຕ່າງໆເມື່ອພວກເຮົາຮ້ອງຂໍເອົາ, ຜົນປະ�โยດການອຸດໜູນຂອງທ່ານອາດຈະຖືກຊັກຊ້າ, ປ່ຽນແປງ, ຫຼື ຢຸດເຊົາ.
  ຕິດຄັດແຜ່ນເຈ້ຍແຍກຕ່າງຫາກ ຖ້າຈຳເປັນ.
- ບັນດາການປ່ຽນແປງທີ່ອາດຈະສົ່ງຜົນກະທົບຕໍ່ກັບສິດທິໃນການໄດ້ຮັບການຊ່ວຍເຫຼືອເງິນສົດ ຫຼືບັດອາຫານທີ່ທ່ານຈຳເປັນຕ້ອງໄດ້ລາຍງານ, ຕ້ອງໄດ້ລາຍງານພາຍໃນ 10 ວັນ.
- ຂໍ້ເທັດຈິງທີ່ທ່ານລາຍງານອາດຈະສົ່ງຜົນເຮັດໃຫ້ຜົນປະ�โยດການອຸດໜູນຂອງທ່ານເພີ່ມຂຶ້ນ, ຫຼຸດລົງ, ຫຼື ຖືກຢຸດເຊົາ.

ຄຳແນະນຳ

ທ່ານຕ້ອງໄດ້ເຮັດສຳເລັດບົດລາຍງານ QR 7 ເລື້ອຍໆສົ່ງໃດ
ສຳລັບການຊ່ວຍເຫຼືອເງິນສົດ ແລະ ບັດອາຫານ ທານຕ້ອງໄດ້ສົ່ງບົດລາຍງານ QR 7 ທີ່ສົມບູນໜຶ່ງຄັ້ງໃນແຕ່ລະໄຕມາດ (ທຸກໆສາມເດືອນ). ທາງເຂດປົກຄອງຈະບອກທານເວລາໃດທີ່ທານຄວນສົ່ງບົດລາຍງານ QR 7 ທີ່ເຮັດສຳເລັດຂອງທານ.

ການລາຍງານສຳລັບບຸກຄົນທີ່ກຳລັງອາໃສຢູ່ໃນເຮືອນຂອງທ່ານ
ຖ້າຄອບຄົວຂອງທ່ານໄດ້ຮັບການຊ່ວຍເຫຼືອເງິນສົດ (ບໍ່ມີບັດອາຫານ), ໃຫ້ລາຍງານຂໍ້ເທັດຈິງສຳລັບ:
- ລູກຄົງ, ລູກບຸນທຳ, ແລະ ລູກນ້ຳ (ລູກຕິດຜົວຫຼືເມຍ) ທັງໝົດ.
- ພໍ່ແມ່ຄົງ, ພໍ່ແມ່ບຸນທຳ, ແລະ ພໍ່ແມ່ນ້ຳ.
- ຍາດພີ່ນ້ອງຄົນອື່ນຂອງເດັກທີ່ໄດ້ຮັບການຊ່ວຍເຫຼືອ.
- ຕົວທານເອງ ແລະ ຄູສົມລົດຂອງທານ ຫຼື ຄູຜົວເມຍທີ່ຈົດທະບຽນໃນເຮືອນ.
- ທຸກໆຄົນຜູ້ທີ່ບໍ່ຢູ່ເຮືອນເປັນການຊົ່ວຄາວ.

ຖ້າຄອບຄົວຂອງທ່ານໄດ້ຮັບທັງການຊ່ວຍເຫຼືອເງິນສົດ ແລະ ບັດອາຫານ ທ່ານຍັງຕ້ອງໄດ້ລາຍງານຂໍ້ເທັດຈິງສຳລັບ:
- ຜູ້ໃຫຍ່ທຸກຄົນທີ່ກຽ່ວຂ້ອງ.
- ຜູ້ອື່ນທີ່ຊື້ ແລະ ແຕ່ງອາຫານຮ່ວມກັບທ່ານ.

ຖ້າຄອບຄົວຂອງທ່ານໄດ້ຮັບແຕ່ບັດອາຫານເທົ່ານັ້ນ, ທ່ານຕ້ອງໄດ້ລາຍງານຂໍ້ເທັດຈິງສຳລັບ:
- ເດັກນ້ອຍທຸກຄົນ.
- ຜູ້ໃຫຍ່ທຸກຄົນທີ່ກຽ່ວຂ້ອງ.
- ຜູ້ອື່ນທີ່ຊື້ ແລະ ແຕ່ງອາຫານຮ່ວມກັບທ່ານ.

ການຮ້ອງຂໍໃຫ້ຢຸດເຊົາການອຸດໜູນ
- ຖ້າທານຮ້ອງຂໍ້ໃຫ້ຢຸດເຊົາການຊ່ວຍເຫຼືອເງິນສົດຂອງທ່ານ, ການປະກັນ Medi-Cal ຂອງທານອາດຈະຖືກຢຸດເຊົາ ຫຼື ປ່ຽນແປງເຊັ່ນກັນ. ທານອາດຈະບໍ່ມີສິດໄດ້ຮັບ Medi-Cal ຫຼື ທານອາດຈະຈຳເປັນຕອງຮວມຈ່າຍຄຸາປະກັນນັ້ນ.
- ໃນບົດລາຍງານ QR 7, ເຮັດສຳເລັດສ່ວນຫົວຂໍ້ຄຳຮ້ອງຂໍໃຫ້ຢຸດເຊົາການອຸດໜູນເທົ່ານັ້ນກໍ່ພໍ ຖ້າທ່ານຕ້ອງການໃຫ້ຢຸດເຊົາການອຸດໜູນໃດໜຶ່ງຂອງທານ. ໃຫ້ໝາຍເອົາການອຸດໜູນທີ່ທານຕ້ອງການຢຸດເຊົາ ຈາກນັ້ນ ເຊັນຊື່ ແລະລົງວັນທີ່ໃນແບບຟອມ QR 7. ຖ້າ ທ່ານພຽງແຕ່ຕອງການຢຸດເຊົາການອຸດໜູນຂອງທານບາງສ່ວນເທົ່ານັ້ນ ແລະ ຮັກສາໄວ້ສ່ວນອື່ນ, ທ່ານຕອງໄດ້ຕື່ມຂໍ້ມູນສ່ວນທີ່ເຫຼືອຂອງແບບຟອມ QR 7.
- ນອກນັ້ນ ທານຍັງສາມາດຮ້ອງຂໍໃຫ້ຢຸດເຊົາການອຸດໜູນຂອງທານ ໂດຍການໂທຫາພະນັກງານຂອງທານ.

ຂໍ້ເທັດຈິງທີ່ທ່ານຕ້ອງໄດ້ລາຍງານສຳລັບແຕ່ລະຄຳຖາມ

ສ່ວນທີ 1: ຄຳຖາມ 1 (ຍົກເວັ້ນຄຳຖາມ 1b) ຫາ 4 ແມ່ນກ່ຽວກັບສິ່ງທີ່ເກີດຂຶ້ນໃນເດືອນລາຍງານ.

ເລກທີ່ຄຳຖາມ:

① ລາຍຮັບຕ່າງໆ, ເບ້ຍລ້ຽງການຝຶກອົບຮົມ, ຫຼື ເງິນອື່ນທີ່ໃຜຜູ້ໜຶ່ງໄດ້ຮັບ. ເຊັ່ນວ່າ ຄ່າຈ້າງ, ຄ່າຈ້າງໃນວັນຢຸດພັກຜ່ອນ, ໂບນັດເປັນເງິນສົດ, ຄ່າຈ້າຍການບໍລິການ ຊ່ວຍເຫຼືອຢູ່ເຮືອນ (IHSS), ເງິນລ້ຽງລູກ ຫຼືຄູສົມລົດ; ປະກັນສັງຄົມ; ເງິນປະກັນລາຍໄດ້ເສີມ/ເງິນລາຍໄດ້ເສີມຂອງລັດ (SSI/SSP); ປະກັນຜູ້ວ່າງງານ/ຜູ້ພິການ; ເງິນຊົດເຊີຍຜູ້ອອກແຮງງານ; ເງິນຊ່ວຍເຫຼືອຜູ້ພິການ ຫຼື ບຳນານປະເພດອື່ນໆ; ເງິນລາງວັນສະຫຼາກ; ເງິນປະກັນ ຫຼືເງິນຊຳລະທາງກົດໝາຍ; ລາຍຮັບຈາກການໃຫ້ເຊົ່າ ຫຼືເງິນຊ່ວຍເຫຼືອຄ່າເຊົ່າ; ທີ່ພັກອາໃສ/ສາທາລະນູປະโภກ/ເສື້ອຜ້າ/ອາຫານທີ່ບໍ່ເສຍຄ່າ; ຫຼື ສິ່ງອື່ນໆອີກ. ບອກຊື່ຂອງບຸກຄົນທີ່ໄດ້ຮັບເງິນ, ບອນທີ່ເຂົາເຈົ້າໄດ້ເງິນມາຈາກໃສ, ວັນທີທີ່ບຸກຄົນດັ່ງກາວໄດ້ຮັບເງິນຕົວຈິງ, ແລະ ຍອດເງິນທັ້ງໝົດທີ່ເຂົາເຈົ້າໄດ້ຮັບ (ໝາຍຄວາມວ່າຈຳນວນກອນເສຍພາສີ ຫຼື ການຫຼັກລົບຕ່າງໆ). ຕິດຄັດຫຼັກຖານຕ່າງໆເຊັ່ນວ່າ, ສິນຄ້າໃບເຊັ່ກ, ສຳເນົາໃບເຊັ່ກ ຫຼື ໃບຢັ້ງຢືນຈາກນາຍຈ້າງ, ໜັງສືມອບເງິນຈາກອົງການທີ່ທານໄດ້ຮັບເງິນຈາກ, ແລະອື່ນໆ. ຖ້າເຮັດທຸລະກິດສ່ວນຕົວ, ແລະ ທານຕ້ອງການອ້າງລາຍຈ່າຍຕົວຈິງ, ໃຫ້ຂຽນບອກລາຍຈ່າຍທຸລະກິດທັງໝົດໃສ່ໃນແຜນເຈ້ຍຕ່າງຫາກ. ຕິດຄັດຫຼັກຖານເຊັ່ນວ່າ, ໃບຮັບເງິນ ຫຼື ໃບເກັບເງິນທີ່ຈ່າຍແລ້ວ, ແລະອື່ນໆ. ຖ້າທານຕອງການຄຳນວນຄ່າໃຊ້ຈ່າຍທຸລະກິດຂອງທານ ໂດຍນຳໃຊ້ການຫັກລົບ 40 ເຊີເຊັນຕາມມາດຕະຖານຂອງລາຍຮັບທີ່ໄດ້ກວດກາແລ້ວຂອງທານ, ທານບໍ່ຈຳເປັນຕອງຂຽນບອກລາຍຈ່າຍທຸລະກິດຂອງທານ.

①a ຂຽນບອກລາຍຊື່ຂອງແຕ່ລະຄົນຜູ້ທີ່ເຮັດວຽກ ຫຼື ຝຶກອົບຮົມ, ບ່ອນໃດ, ແລະ ຈຳນວນຊົ່ວໂມງທັງໝົດສຳລັບເດືອນ.

①b ລາຍຮັບ ຫຼື ເງິນຕ່າງໆທີ່ທ່ານຄາດວ່າຈະປ່ຽນແປງໃນສອງສາມເດືອນຕໍ່ໄປ ຫຼັງ ຈາກ<u>ເດືອນສົ່ງບົດລາຍງານ</u>. ຂຽນບອກລາຍຊື່ຂອງບຸກຄົນທີ່ລາຍຮັບ ຫຼືເງິນຂອງເຂົາເຈົ້າ ຈະປ່ຽນແປງ, ແຫຼງຂໍ້ມູນ, ຍອນຫຍັງມັນຈະປ່ຽນແປງ, ແລະ ຈຳນວນລວມຍອດທັງໝົດສຳລັບແຕ່ລະເດືອນ. ຕິດຄັດຫຼັກຖານຢັ້ງຢືນ.

② ຖ້າໃຜຜູ້ໜຶ່ງທີ່ໄດ້ຮັບບັດອາຫານ ແລະ ເປັນຜູ້ພິການ ຫຼືມີອາຍຸ 60 ປີ ຫຼືສູງກວ່າ ໄດ້ຈ່າຍຄ່າປິ່ນປົວສຸຂະພາບ, ໃຫ້ຂຽນບອກຊື່ຂອງບຸກຄົນຜູ້ທີ່ໄດ້ຈ່າຍ, ຜູ້ທີ່ໄດ້ຮັບການດູແລປິ່ນປົວສຸຂະພາບ, ແລະ ຈຳນວນເງິນທີ່ເຂົາເຈົ້າໄດ້ຈ່າຍ. ຕິດຄັດຫຼັກຖານສະແດງການຈ່າຍ.

③ ຖ້າໃຜຜູ້ໜຶ່ງທີ່ໄດ້ຮັບບັດອາຫານໄດ້ຈ່າຍຄ່າດູແລເດັກ, ດູແລຄົນພິການ, ຫຼື ຜູ້ເພິ່ງພາອາໃສອື່ນໃນເວລາໄປເຮັດວຽກ, ຊອກຫາວຽກເຮັດ, ຫຼື ໃນເວລາທີ່ເຂົາເຈົ້າຢູ່ໂຮງຮຽນ ຫຼື ຝຶກອົບຮົມ ໃນລະຫວ່າງເດືອນລາຍງານ, ໃຫ້ຂຽນບອກລາຍຊື່ຂອງບຸກຄົນ ຜູ້ທີ່ຈ່າຍເງິນ, ໃຜໄດ້ຮັບການດູແລ, ແລະ ຈຳນວນເງິນທີ່ເຂົາເຈົ້າໄດ້ຈ່າຍ. ຕິດຄັດຫຼັກຖານສະແດງການຈ່າຍ.

④ ຖ້າໃຜຜູ້ໜຶ່ງທີ່ໄດ້ຮັບບັດອາຫານໄດ້ຈ່າຍຄ່າລ້ຽງດູລູກຕາມຄຳສັ່ງສານ, ໃຫ້ຂຽນບອກລາຍຊື່ຂອງບຸກຄົນຜູ້ທີ່ຈ່າຍເງິນ ແລະ ຈຳນວນເງິນທີ່ເຂົາເຈົ້າໄດ້ຈ່າຍ. ຕິດຄັດຫຼັກຖານສະແດງການຈ່າຍ.

⑤ ຖ້າບັນດາລາຍຈ່າຍໃນຄຳຖາມທີ 2, 3, ແລະ 4 ຈະມີການປ່ຽນແປງໃນສາມເດືອນຕໍ່ໄປຫຼັງຈາກເດືອນສົ່ງບົດລາຍງານ, ໃຫ້ຂຽນບອກລາຍຈ່າຍຄ່າປິ່ນປົວສຸຂະພາບສຳລັບບາງຄົນທີ່ມີອາຍຸ 60 ຂຶ້ນໄປ; ຄ່າດູແລເດັກ/ຜູ້ເພິ່ງພາອາໃສ; ແລະ ຄ່າລ້ຽງດູລູກ. ຂຽນບອກລາຍຊື່ຂອງຜູ້ທີ່ຈ່າຍເງິນ, ຈຳນວນເງິນທີ່ເຂົາເຈົ້າໄດ້ຈ່າຍ, ໃຜໄດ້ຮັບການດູແລ ຫຼື ເດັກນ້ອຍຜູ້ທີ່ໄດ້ຮັບຄ່າລ້ຽງດູ, ແມ່ນຫຍັງແດມີການປ່ຽນແປງ, ແລະ ຈະປ່ຽນແປງເວລາໃດ. ຕິດຄັດຫຼັກຖານສະແດງການຈ່າຍ.

ສ່ວນທີ 2: ຄຳຖາມທີ 6 ຫາ 9 ແມ່ນກ່ຽວກັບສິ່ງທີ່ໄດ້ເກີດຂຶ້ນນັບຈາກບົດລາຍງານປະຈຳໄຕມາດຄັ້ງທີ່ແລວຂອງທານ.

⑥ ໃຜກໍ່ຕາມທີ່ໄດ້ຮັບ, ໄດ້ຊື້, ໄດ້ຂາຍ, ແລກປ່ຽນ, ຫຼື ໃຫ້ລ້າຊັບສິນໃດໜຶ່ງຕໍ່ໄປນີ້: ທີ່ດິນ, ເຮືອນ, ລົດ, ບັນຊີທະນາຄານ, ເງິນລາງວັນ (ລາງວັນສະຫຼາກ ຫຼື ການພະນັນ, ເງິນປະກັນສັງຄົມຍ້ອນຫຼັງ, ເງິນຈ່າຍຄືນພາສີ), ແລະອື່ນໆ. ບອກຊື່ຜູ້ທີ່ເປັນເຈົ້າຂອງ ຫຼື ເຄີຍເປັນເຈົ້າຂອງຊັບສິນນັ້ນ, ປະເພດຊັບສິນ, ມັນປ່ຽນແປງເວລາໃດ, ມູນຄ່າຂອງຊັບສິນ, ແລະ ສິ່ງທີ່ໄດ້ເກີດຂຶ້ນ. ຕິດຄັດຫຼັກຖານສະແດງ.

⑦ ໃຜກໍ່ຕາມທີ່ໄດ້ຍ້າຍເຂົ້າ ຫຼືຍ້າຍອອກຈາກເຮືອນຂອງທ່ານ ຫຼືຖ້າທ່ານໄດ້ຍ້າຍເຂົ້າພ້ອມກັບຄົນອື່ນ. ນີ້ປະກອບມີ; ເດັກເກີດໃໝ່; ບຸກຄົນທີ່ບໍ່ຢູ່ເຮືອນເປັນການຊົ່ວຄາວ; ໃຜກໍ່ຕາມທີ່ໄດ້ເສຍຊີວິດ, ໄດ້ເຂົ້າ ຫຼືອອກຈາກໂຮງໝໍ ຫຼືສະຖານໃດໜຶ່ງ (ລວມທັງສະຖານທີ່ຄຸມຂັງ), ແລະອື່ນໆ. ບອກລາຍຊື່ຂອງບຸກຄົນຜູ້ທີ່ໄດ້ຍ້າຍເຂົ້າ ຫຼືຜູ້ທີ່ທານໄດ້ຍ້າຍເຂົ້າພ້ອມກັບທານ, ຄວາມສຳພັນຂອງເຂົາເຈົ້າຕໍ່ກັບທານ, ສິ່ງທີ່ເກີດຂຶ້ນ, ແລະ ວັນທີທີ່ມັນໄດ້ເກີດຂຶ້ນ.

⑧ ໃຜກໍ່ຕາມໃນເຮືອນຂອງທ່ານທີ່ຖືກຕັດສິນໂທດທີ່ກ່ຽວຂ້ອງກັບຢາເສບຕິດໃນຂໍ້ຫາມີໄວຄອບຄອງ, ນຳໃຊ້, ແຈກຈ່າຍສານຕອງຫາມຕ່າງໆ ຫຼື ຜູ້ທີ່ຫຼີກລ່ຽງ ຫຼືຫຼີບໜີຈາກກົດໝາຍເພື່ອຫຼີກລ່ຽງການດຳເນີນຄະດີ, ການຄຸມຂັງ, ຫຼື ການກັກຕົວ ຫຼື ທີ່ລະເມີດການປອຍຄຸມປະພຶດ ຫຼືການປອຍພາງ. ບອກລາຍຊື່ຂອງບຸກຄົນ, ບ່ອນທີ່ເຂົາເຈົ້າຖືກຕັດສິນໂທດ, ແລະ ວັນທີທີ່ເຂົາເຈົ້າຖືກຕັດສິນໂທດ. ຖ້າທານໃນເມື່ອກອນ ໄດ້ລາຍງານຂໍ້ມູນດັ່ງກາວແກທາງເຂດປົກຄອງໃນບົດລາຍງານປະຈຳໄຕມາດຄັ້ງກອນແລວ, ທານບໍ່ຈຳເປັນຕອງລາຍງານຂໍ້ມູນດຽວກັນອີກໃນແຕ່ລະໄຕມາດ.

⑨ ຂໍ້ເທັດຈິງອື່ນທີ່ສາມາດປ່ຽນແປງສິດທິໄດ້ຮັບ ຫຼື ຈຳນວນຜົນປະ�โยດການອຸດໜູນຂອງທານ: ການແຕ່ງງານ, ການຢາຮາງ, ການແຍກກັນຢູ່, ການຈົດທະບຽນຄູ່ຜົວເມຍ ລັດຄາລິຟໍເນັຍ (DP), ຄູ່ຜົວເມຍ DP ລັດອື່ນ, ສິ້ນສຸດຄູ່ຜົວເມຍ DP, ຖິ້ມ້ຳ, ມີລູກ, ບໍ່ຖືພາອີກຕໍ່ໄປ; ການເປັນຜູ້ພິການ ຫຼື ຟື້ນຟູຈາກຄວາມພິການ/ການເຈັບປວຍຮຸນແຮງ; ເລີ່ມເຮັດວຽກ ຫຼື ຢຸດເຊົາເຮັດວຽກ, ປະຕິເສດວຽກເຮັດ ຫຼືການຝຶກອົບຮົມ, ຈຳນວນຊົ່ວໂມງທີ່ເຮັດວຽກ ທີ່ ຝຶກອົບຮົມມີການປ່ຽນແປງ, ເຂົ້າຮວມການຢຸດງານປະທວງ; ຄວາມເປັນພົນລະເມືອງ ຫຼືສະຖານະການເຂົ້າເມືອງມີການປ່ຽນແປງ ຫຼື ໄດ້ຮັບບັນທຶກເອກະສານໃໝ່ USCIS; ເລີ່ມຕົ້ນ, ຢຸດເຊົາ, ຫຼືປ່ຽນແປງຜົນປະ�โยດປະກັນສຸຂະພາບ, ປະກັນ MEDICARE, ແຂວ, ຫຼື ປະກັນຊີວິດ; ການປ່ຽນແປງໃດໆດ້ານເວລາຂອງການດູແລ ຫຼື ເບິ່ງແຍງລູກຂອງທານ; ເລີ່ມຕົ້ນ ຫຼື ຢຸດເຊົາການໄດ້ຮັບບໍລິການຊ່ວຍເຫຼືອຢູ່ເຮືອນ; ນັກຮຽນອາຍຸ 6 - 18 ຢຸດເຊົາ ຫຼື ເລີ່ມຕົ້ນເຂົ້າໂຮງຮຽນເປັນປົກກະຕິ; ນັກຮຽນອາຍຸ 16 ປີຂຶ້ນໄປ ຢຸດເຊົາ ຫຼື ເລີ່ມຕົ້ນເຂົ້າໂຮງຮຽນ/ວິທະຍາໄລ.

ເບິ່ງຂໍ້ມູນເພີ່ມເຕີມຢູ່ດ້ານຫຼັງ

ການປ່ຽນແປງທີ່ຢູ່

ບອກພວກເຮົາຂໍ້ເທັດຈິງກ່ຽວກັບການປ່ຽນແປງທີ່ຢູ່ ຫຼື ເບີ�โทຂອງທ່ານ. ຖ້າທ່ານກຳລັງໄດ້ຮັບບັດອາຫານ ທ່ານອາດຈະຖືກຮ້ອງຂໍໃຫ້ສະໜອງຫຼັກຖານສະແດງຄ່າໃຊ້ຈ່າຍບ່ອນຢູ່ອາໃສໃໝ່ ເຊັ່ນວ່າຄ່າເຊົ່າ ແລະ ຄ່າສາທາລະນະປະโพກ. ຖ້າຄ່າບ່ອນພັກອາໃສຂອງທ່ານເພີ່ມຂຶ້ນ ເນື່ອງຈາກການຍ້າຍທີ່ຢູ່ ໃຫ້ແນ່ໃຈວ່າໄດ້ບອກຈຳນວນຄ່າໃຊ້ຈ່າຍໃໝ່.

ໃຜຕ້ອງໄດ້ເຊັນຊື່ໃນບົດລາຍງານ QR 7

- **ສຳລັບການຊ່ວຍເຫຼືອເງິນສົດ:** ທ່ານ ແລະຄູ່ສົມລົດທີ່ໄດ້ຮັບການຊ່ວຍເຫຼືອຂອງທ່ານ, ຄູ່ຜົວເມຍທີ່ໄດ້ຈົດທະບຽນຄອບຄົວ, ແລະ ພໍ່ແມ່ຄົນອື່ນຂອງເດັກນ້ອຍທີ່ໄດ້ຮັບການຊ່ວຍເຫຼືອ ຖ້າເຂົາເຈົ້າອາໃສຢູ່ໃນເຮືອນຂອງທ່ານ.
- **ສຳລັບບັດອາຫານ:** ຫົວໜ້າຄົວເຮືອນ, ແລະ ສະມາຊິກຄົວເຮືອນທີ່ເປັນຜູ້ໃຫຍ່ ຫຼື ຜູ້ຕ່າງໜ້າທີ່ໄດ້ຮັບມອບໝາຍຂອງຄົວເຮືອນ.
- **ແລະ:** ບຸກຄົນຜູ້ອື່ນໆທີ່ຕື່ມແບບຟອມບົດລາຍງານ, ລ່າມແປພາສາ ຫຼື ພະຍານຕໍ່ກັບກາໝາຍຂອງທ່ານ.

ສິ່ງທີ່ພວກເຮົາໝາຍເຖິງເມື່ອພວກເຮົາເວົ້າວ່າ

ຫຼີກລ່ຽງ ຫຼື ຫຼີບໜີຈາກກົດໝາຍເພື່ອຫຼີກໜີຈາກການດຳເນີນຄະດີ, ການຄຸມຂັງ ຫຼືການກັກຕົວ: ບຸກຄົນຈະຖືກຖືວ່າຫຼີກລ່ຽງ ຫຼືຫຼີບໜີຈາກກົດໝາຍ ຖ້າມີການອອກໝາຍຈັບ ແລະ ບຸກຄົນດັ່ງກ່າວໄດ້ຮູ້ ຫຼືຄວນຈະໄດ້ຮູ້ຈາກຄວາມຈິງທີ່ວ່າກົດໝາຍກຳລັງຊອກຫາຕົວເຂົາເຈົ້າ.

ການຊ່ວຍເຫຼືອເງິນສົດ: ໂຄງການ CalWORKs (ໂຄງການສິ່ງເສີມໂອກາດເຮັດວຽກ ແລະຄວາມຮັບຜິດຊອບຕໍ່ເດັກລັດຄາລິຟໍເນັຍ) ແລະ ການຊ່ວຍເຫຼືອເງິນສົດສຳລັບຜູ້ອົບພະຍົບ.

ສານຕ້ອງຫ້າມ: ຢາເສບຕິດທີ່ຈຳກັດການມີໂດຍກົດໝາຍຂອງລັດຖະບານກາງ ຫຼື ກົດໝາຍລັດ, ລວມມີແຕ່ບໍ່ຈຳກັດ, ຢາເສບຕິດ, ຢານາະຕຸ້ນ, ຢາລະງັບ, ຢາຫຼອນປະສາດ ແລະ ກັນຊາ.

ບົດລາຍງານ QR 7 ທີ່ສົມບູນ: ບົດລາຍງານ QR 7 ແມ່ນແລ້ວ "ສົມບູນ" ເມື່ອ:

- ທຸກໆຄຳຖາມຕອບ ແມ່ນ/ບໍ່ແມ່ນ ໄດ້ຖືກຕອບ, ແລະ
- ທຸກໆຂໍ້ມູນໄດ້ຖືກຕື່ມລົງໃນແບບຟອມ, ແລະ
- ທຸກໆຫຼັກຖານໄດ້ຖືກຕິດຄັດ ເມື່ອແບບຟອມຮ້ອງຂໍໃຫ້ຕິດຄັດ, ແລະ
- ທຸກໆລາຍເຊັນທີ່ຈຳເປັນຕ້ອງມີແມ່ນມີໃນແບບຟອມ, ແລະ
- ແບບຟອມໄດ້ຖືກເຊັນ ແລະ ລົງວັນທີ ຫຼັງຈາກມື້ສຸດທ້າຍຂອງເດືອນລາຍງານ.

ຄ່າລ້ຽງດູລູກຕາມຄຳສັ່ງຂອງສານ: ຈຳນວນເງິນທີ່ເອກະສານທາງກົດໝາຍ ຫຼື ສານກຳນົດໃຫ້ທ່ານຕ້ອງໄດ້ຈ່າຍໃຫ້ບຸກຄົນໃດໜຶ່ງສຳລັບເດັກທີ່ບໍ່ຢູ່ໃນເຮືອນຂອງທ່ານ. ລວມມີເງິນທີ່ຈ່າຍໃຫ້ໂດຍພໍ່ແມ່ນ້ຳ.

ຈຳນວນລວມຍອດ: ຈຳນວນເງິນຂອງເຊັກສັ່ງຈ່າຍ ກ່ອນການຫັກລົບຕ່າງຈະຖືກຫັກອອກເພື່ອຈ່າຍພາສີ, ຄ່າປະກັນສັງຄົມ, ແລະອື່ນໆ.

ລະເມີດການປ່ອຍຄຸມປະພຶດ ຫຼື ການປ່ອຍພາງ: ການປ່ອຍຄຸມປະພຶດ ຫຼື ການປ່ອຍພາງຖືກລົບລ້າງ ຫຼື ມີການອອກໝາຍຈັບ. ຄວາມຜິດເບື້ອງຕົ້ນທີ່ມີການສັງໃຫ້ປ່ອຍຄຸມປະພຶດ ຫຼື ປ່ອຍພາງ ສາມາດເປັນໂທດອາຍາຮ້າຍແຮງ ຫຼື ໂທດສະຖານເບົາກໍ່ໄດ້.

ເດືອນລາຍງານ: ເດືອນທີ່ປະກົດໃນສ່ວນທີ 1 ຂອງແບບຟອມ QR 7.
ເດືອນສິ່ງລາຍງານ: ເດືອນທີ່ປະກົດໃນຫົວເຈ້ຍຢູ່ສ່ວນເທິງຂອງແບບຟອມ QR 7.

ຫົວຂໍ້ການຢັ້ງຢືນ

- ທ່ານຕ້ອງໄດ້ເຊັນຊື່ໃນແບບຟອມ QR 7 "ພາຍໃຕ້ບົດລົງ�โทດຄວາມຜິດຖານໃຫ້ຂໍ້ມູນບໍ່ເປັນຄວາມຈິງ." ນີ້ໝາຍຄວາມວ່າທ່ານໄດ້ສາບານວ່າຂໍ້ເທັດຈິງຕ່າງໆທີ່ທ່ານໃຫ້ພວກເຮົາແມ່ນຂໍ້ມູນຄວາມຈິງ, ຖືກຕ້ອງ ແລະ ຄົບຖ້ວນສົມບູນ.
- ການໃຫ້ຂໍ້ມູນທີ່ບໍ່ເປັນຄວາມຈິງ ແລະ ການສໍ້ໂກງແມ່ນຄວາມຜິດທີ່ມີໂທດຕາມກົດໝາຍ.

ບົດລົງ�โทດສຳລັບການສໍ້ໂກງສະຫວັດດີການຊ່ວຍເຫຼືອເງິນສົດ: ຖ້າທ່ານບໍ່ປະຕິບັດຕາມກົດລະບຽບຂອງໂຄງການຊ່ວຍເຫຼືອເງິນສົດໂດຍເຈດຕະນາ, ການຊ່ວຍເຫຼືອເງິນສົດຂອງທ່ານຈະຖືກຫຼຸດລົງເປັນໄລຍະເວລາໃດໜຶ່ງ ແລະ ທ່ານອາດຈະຖືກປັບໃໝເຖິງ $10,000 ແລະ/ຫຼື ຖືກຄຸມຂັງຫຼືຈຳຄຸກເປັນເວລາສູງເຖິງ 3 ປີ. ການຊ່ວຍເຫຼືອເງິນສົດຂອງທ່ານສາມາດຖືກຍຸດເຊົາ:

- ສຳລັບການບໍ່ລາຍງານຂໍ້ເທັດຈິງທັງໝົດ ຫຼືໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ: 6 ເດືອນສຳລັບການກະທຳຜິດຄັ້ງທຳອິດ, 12 ເດືອນສຳລັບການກະທຳຜິດຄັ້ງທີສອງ, ຫຼື ຕະຫຼອດໄປສຳລັບຄັ້ງທີສາມ.
- ສຳລັບການສິ່ງຄຳຮ້ອງສະໝັກໜຶ່ງ ຫຼືຫຼາຍຄັ້ງເພື່ອໃຫ້ໄດ້ຮັບການຊ່ວຍເຫຼືອໃນຫຼາຍກວ່າໜຶ່ງກຳລະນີສຳລັບໄລຍະເວລາດຽວກັນ: 2 ປີສຳລັບຄວາມຜິດຄັ້ງທຳອິດ, 4 ປີສຳລັບຄັ້ງທີສອງ, ແລະ ຕະຫຼອດໄປສຳລັບຄັ້ງທີສາມ.
- ສຳລັບການຕັດສິນ�โทດຄວາມຜິດຖານສໍ້ໂກງເພື່ອໃຫ້ໄດ້ຮັບການຊ່ວຍເຫຼືອ: 2 ປີສຳລັບສຳລັບການລັກເງິນຈຳນວນຕ່ຳກວ່າ $2,000; 5 ປີສຳລັບເງິນຈຳນວນ $2,000 ຫາ $4,999.00; ແລະ ຕະຫຼອດໄປສຳລັບເງິນຈຳນວນ $5,000 ຂຶ້ນໄປ.
- ຕະຫຼອດໄປ: ສຳລັບການສິ່ງໃຫ້ເຂດປົກຄອງຫຼັກຖານບ່ອນຢູ່ປອມເພື່ອໃຫ້ໄດ້ຮັບການຊ່ວຍເຫຼືອໃນສອງ ຫຼືຫຼາຍເຂດປົກຄອງ ຫຼືລັດໃນເວລາດຽວກັນ; ໃຫ້ຂໍ້ມູນເທັດຈິງທີ່ບໍ່ຖືກຕ້ອງແກກທາງເຂດປົກຄອງສຳລັບເດັກທີ່ບໍ່ມີສິດໄດ້ຮັບ ຫຼືເດັກທີ່ບໍ່ມີຕົວຕົນຢູ່ຈິງ; ໄດ້ຮັບຜົນປະ�โทຍດເປັນເງິນສົດຫຼາຍກວ່າ $10,000 ຈາກການສໍ້ໂກງ; ຖືກຕັດສິນຄວາມຜິດ�โทດສໍ້ໂກງເປັນຄັ້ງທີສາມໃນສານກົດໝາຍ ຫຼື ການພິຈາລະນາໄຕ່ສວນຄະດີຝ່າຍປົກຄອງ.

ບົດລົງ�โทດສຳລັບການສໍ້ໂກງບັດອາຫານ: ຖ້າທ່ານຕັ້ງໃຈບໍ່ປະຕິບັດຕາມກົດລະບຽບຂອງບັດອາຫານ, ບັດອາຫານຂອງທ່ານສາມາດຖືກຍຸດເຊົາເປັນເວລາ 12 ເດືອນສຳລັບການລະເມີດຄັ້ງທຳອິດ, 24 ເດືອນສຳລັບຄັ້ງທີສອງ, ແລະ ຕະຫຼອດໄປສຳລັບຄັ້ງທີສາມ. ທ່ານອາດຈະຖືກປັບໃໝເຖິງ $250,000 ແລະ/ຫຼື ຖືກຄຸມຂັງ/ຈຳຄຸກເປັນເວລາ 20 ປີ.

- **ຖ້າທ່ານພົບວ່າມີຄວາມຜິດຕາມການຕັດສິນຂອງສານ ຫຼື ການພິຈາລະນາຄະດີຝ່າຍປົກຄອງ ເນື່ອງຈາກວ່າ:**
- ທ່ານແລກປ່ຽນ ຫຼື ຂາຍບັດອາຫານເພື່ອເອົາອາວຸດປືນ, ລູກປືນ, ຫຼືລະເບີດ, ບັດອາຫານຂອງທ່ານສາມາດຖືກຍຸດເຊົາຕະຫຼອດໄປສຳລັບການລະເມີດຄັ້ງທຳອິດ.
- ທ່ານແລກປ່ຽນ ຫຼື ຂາຍບັດອາຫານເພື່ອເອົາສານຕ້ອງຫ້າມຫຼືຢາເສບຕິດ, ບັດອາຫານຂອງທ່ານສາມາດຖືກຍຸດເຊົາເປັນເວລາ 24 ເດືອນສຳລັບການລະເມີດຄັ້ງທຳອິດ ແລະ ຕະຫຼອດໄປສຳລັບຄັ້ງທີສອງ.
- ທ່ານແລກປ່ຽນ ຫຼື ຂາຍບັດອາຫານທີ່ມີມູນຄ່າ $500 ຂຶ້ນໄປ, ບັດອາຫານ ຂອງທ່ານສາມາດຖືກຍຸດເຊົາຕະຫຼອດໄປ.
- ທ່ານເອົາບັດປະຈຳຕົວ ຫຼືຂໍ້ມູນທີ່ຢູ່ອາໃສທີ່ປອມແປງໃຫ້ແກ່ເຂດປົກຄອງ, ເພື່ອວ່າທ່ານຈະສາມາດໄດ້ຮັບບັດອາຫານໃນຫຼາຍກວ່າໜຶ່ງກຳລະນີໃນເວລາດຽວກັນ, ບັດອາຫານຂອງທ່ານສາມາດຖືກຍຸດເຊົາເປັນເວລາ 10 ປີ.

ຍ່າລືມ:

- **ຖ້າບົດລາຍງານຂອງທ່ານຊັກຊ້າ, ບໍ່ຄົບຖ້ວນສົມບູນ ຫຼື ບໍ່ສົ່ງມາ, ຜົນປະ�โทຍດການອຸດໜູນຂອງທ່ານອາດຈະຊັກຊ້າ, ຖືກປ່ຽນແປງ ຫຼື ຍຸດເຊົາ.**
- **ຖ້າບົດລາຍງານຂອງທ່ານບໍ່ຄົບຖ້ວນສົມບູນໃນເວລາທີ່ທ່ານສົ່ງມາ, ທ່ານຈະຖືກຮ້ອງຂໍໃຫ້ເຮັດສຳເລັດມັນອີກຄັ້ງ.**
- **ຖ້າທ່ານເຊັນຊື່ ແລະລົງວັນທີບົດລາຍງານຂອງທ່ານກ່ອນມື້ສຸດທ້າຍຂອງເດືອນລາຍງານ, ທ່ານຈະຖືກຮ້ອງຂໍໃຫ້ເຊັນຊື່ ແລະ ລົງວັນທີໃໝ່ອີກຄັ້ງ.**
- **ຖ້າທ່ານບໍ່ແນ່ໃຈວ່າຈະລາຍງານແນວໃດ, ລາຍງານຫຍັງແດ່ ຫຼື ຫຼັກຖານຫຍັງແດ່ທີ່ທ່ານຕ້ອງໄດ້ສິ່ງ, ໃຫ້ສອບຖາມນຳພະນັກງານຂອງທ່ານ.**
- **ຖ້າການຊ່ວຍເຫຼືອເງິນສົດຂອງທ່ານຢຸດເຊົາ, ທ່ານອາດຈະຍັງມີສິດໄດ້ຮັບຜົນປະ�โทຍດການອຸດໜູນບັດອາຫານຢູ່ ເຖິງແມ່ນວ່າດຽວນີ້ທ່ານໄດ້ມີວຽກເຮັດແລ້ວກໍ່ຕາມ.**
- **ຖ້າການຊ່ວຍເຫຼືອເງິນສົດຂອງທ່ານຢຸດເຊົາ, ທ່ານອາດຈະຍັງມີສິດໄດ້ຮັບປະກັນສຸຂະພາບທີ່ບໍ່ເສຍຄ່າໃຊ້ຈ່າຍເລີຍ ຫຼື ເສຍຄ່າໃຊ້ຈ່າຍຕ່ຳພາຍໃຕ້ການປະກັນ Medi-Cal.**